ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປ່າໄມ້

ເລກທີ 1659/ປມ.05.

ນະຄອນຫຼວງວຽງຈັນ,ວັນທີ .....21...SEP...2005

ຮຽນ : ທ່ານ ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ.

ເລື່ອງ : ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

- ອີງຕາມ ດຳລັດ ສະບັບ ເລກທີ 38/ນຍ, ລົງວັນທີ 21/02/2005. ວ່າດ້ວຍ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
- ອີງຕາມ ການຕົກລົງຂອງກອງປະຊຸມ ສະພາບໍລິຫານກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຄັ້ງທີ 16/09/2005 ທີ່ໄດ້ມອບໝາຍໃຫ້ ກົມປ່າໄມ້ ແລະ ກອງເລຂາ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສືບຕໍ່ປະສານສົມທົບກັບຂະແໜງການ ສາຍຕັ້ງກ່ຽວກັບ ວຽກງານກອງທຶນ.

ເພື່ອຈັດຕັ້ງປະຕິບັດ ຕາມການຕົກລົງທີ່ກ່າວຂ້າງເທິງນີ້ ແລະ ປະກອບສ່ວນເພື່ອເຮັດໃຫ້ວຽກງານກອງທຶນ ພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໄດ້ຮັບການຈັດຕັ້ງປະຕິບັດໄປຕາມແຜນການ, ກົມປ່າໄມ້ ສະເໜີມາຍັງ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ. ເພື່ອຊ່ວຍຊີ້ນຳຂະແໜງປ່າໄມ້ ເອົາໃຈໃສ່ ຈັດຕັ້ງປະຕິບັດ ບາງວຽກງານຮີບດ່ວນດັ່ງນີ້ :

1. ໃຫ້ຫົວໜ້າຂະແໜງປ່າໄມ້ແຂວງ ນະຄອນຫຼວງ ແລະ ເຂດພິເສດ ໄປສົມທົບກັບ ຫົວໜ້າຫ້ອງການ ຄັງເງິນແຂວງ, ນະຄອນຫຼວງ ແລະ ເຂດພິເສດ ກ່ຽວກັບການເປີດບັນຊີເງິນຝາກຂອງກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ສຳເລັດ. ທັງນີ້ ກໍ່ຍ້ອນວ່າ ກົມຄັງເງິນ ກະຊວງການເງິນໄດ້ຊີ້ນຳ ແລະ ອະນຸມັດ ທາງດ້ານຫຼັກການວ່າ ໃຫ້ເປີດບັນຊີແລ້ວ ຕາມແຈ້ງການ ສະບັບ ເລກທີ 1931/ກງ, ລົງວັນທີ 19/08/2005.
2. ໃຫ້ຕິດຕາມເອົາລາຍຮັບ ຈາກຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງທົດແທນ, ຄ່າສຳຫຼວດປ່າໄມ້ ແລະ ລາຍຮັບອື່ນໆ ທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 12 ຂອງດຳລັດ

ສະບັບເລກທີ 38/ນຍ, ລົງວັນທີ 21/02/2005. ທີ່ປະຕິບັດໄດ້ໃນ ສົກປີ 2004-2005 ເຂົ້າໃນບັນຊີຂອງກອງທຶນໃຫ້ສຳເລັດ .

3. ຜ່ານການຈັດຕັ້ງປະຕິບັດວຽກງານ ທີ່ກຳນົດໄວ້ ຢູ່ໃນຂໍ້ ທີ່ 01 ແລະ ທີ 02 ຂ້າງເທິງນີ້ ໃຫ້ຂະ ແໜງປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ສັງລວມລາຍງານ ພະແນກກະສິກຳ ແລະ ປ່າໄມ້ ແລະ ກົມປ່າໄມ້. ເນື້ອໃນບົດລາຍງານຕ້ອງສ່ອງແສງໃຫ້ເຫັນ ຜົນການ ເປີດບັນຊີ, ເລກໝາຍບັນຊີ ແລະ ມື້ເປີດບັນຊີ, ລາຍຮັບທັງໝົດໃນສົກປີ 2004-2005 ຂອງກອງທຶນ ໃນນີ້ມອບແລ້ວເທົ່າໃດ, ຍັງຄ້າງເທົ່າໃດ, ແລະ ບັນຫາອື່ນໆ.

ດັ່ງນັ້ນ, ຈິ່ງສະເໜີມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມປ່າໄມ້.

ອິນປັນ ສູນທະນູສິນ